ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6

ນະຄອນຫຼວງວຽງຈັນ,ວັນທີ: 23 ທັນວາ 2024

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ເຂົ້າຮ່ວມພິທີມອບ-ຮັບລາງວັນ ການເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2024



ເມື່ອວັນທີ 20 ທັນວາ 2024 ເວລາ 9.30- 12.00 ນ. ທີ່ ຕະຫຼາດຫລັກຊັບລາວ ຊັ້ນ 8, ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ເຂົ້າຮ່ວມພິທີມອບ-ຮັບລາງວັນການເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນການຄຸ້ມຄອງ ບໍລິຫານດີເດັ່ນ ປະຈຳປີ 2024 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX Disclosure and CG Award 2024). ເຊິ່ງເປັນງານມອບ-ຮັບລາງວັນ ສຳຫລັບບໍລິສັດຈົດທະບຽນໃນຕະຫຼາດຫລັກຊັບລາວ ທີ່ມີຜົນງານດີເດັ່ນ, ເຊິ່ງໃນປີນີ້ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ຮັບໃບຍ້ອງຍໍ ຈຳນວນ 2 ລາງວັນ ໄດ້ແກ່:

ໃບຍ້ອງຍໍ ການເປີດເຜີຍຂໍ້ມູນດີເດັ່ນປະເພດ I ປະຈຳປີ 2024



ທ່ານສຸພັກ ຖິ່ນໄຊພອນ ຜູ້ອຳນວຍການໃຫ່ຍຕະຫລາດຫລັກຊັບລາວໃຫ້ກຽດເປັນຜູ້ມອບລາງວັນໃບຍ້ອງຍໍ ການເປີດເຜີຍຂໍ້ມູນດີເດັ່ນປະເພດ I ປະຈຳປີ 2024 ແກ່ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ່າງໜ້າໂດຍ ທ່ານ ມານິບ ຕຣິລິດວິໄລ ຜູ້ອຳນວຍການ.



ໃບຍ້ອງຍໍການຄຸ້ມຄອງບໍລິຫານດີເດັ່ນປະເພດ II ປະຈຳປີ 2024

.



ທ່ານ ເອກະລາດ ສີສານ ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັບຊັບລາວ ໃຫ້ກຽດເປັນຜູ້ມອບລາງວັນໃບຍ້ອງຍໍການຄຸ້ມຄອງບໍລິຫານດີເດັ່ນປະເພດ II ປະຈຳປີ 2024 ແກ່ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ່າງໜ້າໂດຍ ທ່ານ ມານີ ຕຣີລິດວິໄລ ຜູ້ອຳນວຍການ.



ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ເປັນບໍລິສັດໜຶ່ງທີ່ໃສ່ໃຈເລື່ອງການເປີດເຜີຍຂໍ້ມູນການດຳເນີນການ ແລະ ການເຄື່ອນໄຫວທຸລະກິດຕ່າງໆ ຂອງບໍລິສັດ ໃຫ້ແກ່ມວນຊົນ ແລະ ນັກລົງທຶນ ຢ່າງຄົບຖ້ວນ ຈະແຈ້ງ ແລະ ທັນເວລາ ແລະ ຍຶດໝັ້ນໃນການຄຸ້ມຄອງບໍລິຫານທີ່ດີ.